ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 02 /ຈນວ

ວັນທີ 21 ພຶດສະພາ 2021

# ແຈ້ງການ

## ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງ ວ່າດ້ວຍການເພີ່ມທະວີມາດຕະການປ້ອງກັນ ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ໄລຍະວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021

ເຖິງ:
- ຫົວໜ້າກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ, ອົງການທຽບເທົ່າພະແນກ ນະຄອນຫຼວງວຽງຈັນ;
- ເຈົ້າເມືອງ ແລະ ນາຍບ້ານ ທົ່ວນະຄອນຫຼວງວຽງຈັນ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ ນະຄອນຫຼວງວຽງຈັນ.

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ ສະບັບເລກທີ 34/ສພຊ, ລົງວັນທີ 09 ພະຈິກ 2017;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021ແລະ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021 ກ່ຽວກັບການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໄລຍະວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021.

ເຈົ້າຄອງນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜ່ານການຈັດຕັ້ງປະຕິບັດມາດຕະການຕ່າງໆ ຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ, ບັນດາຂະແໜງການຂັ້ນສູນກາງ ແລະ ນະຄອນຫລວງວຽງຈັນ ໃນຜ່ານມາ ເຫັນວ່າການຈັດຕັ້ງທຸກຂັ້ນ, ທຸກພາກສ່ວນ ລວມທັງພາກລັດ, ທຸລະກິດ ແລະ ສັງຄົມ ລ້ວນແຕ່ໄດ້ປະຕິບັດໜ້າທີ່ ແລະ ພັນທະຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ມີທ່າອ່ຽງຫຼຸດລົງ. **ແຕ່ເຖິງຢ່າງໃດກໍ່ຕາມ ສະພາບການລະບາດ ກໍ່ຍັງສືບຕໍ່ແຜ່ລາມໃນຊຸມຊົນເປັນວົງກວ້າງ** ເຊິ່ງເຮັດໃຫ້ການຄວບຄຸມ ແລະ ສະກັດກັ້ນ ມີຄວາມຫຍຸ້ງຍາກຂຶ້ນ. ດັ່ງນັ້ນ, ນະຄອນຫຼວງວຽງຈັນ ຈຶ່ງຈຳເປັນຕ້ອງສືບຕໍ່ປະຕິບັດບັນດາມາດຕະການ ທີ່ໄດ້ລະບຸໄວ້ໃນຄຳສັ່ງ ສະບັບເລກທີ 15/ນຍ, ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 528/ຫສນຍ, ແຈ້ງການກະຊວງສາທາລະນະສຸກ ສະບັບເລກທີ 0488/ສທ ແລະ ແຈ້ງການຕ່າງໆຂອງບັນດາກະຊວງ, ພ້ອມທັງ ຍົກລະດັບມາດຕະການໃນການຄວບຄຸມ, ສະກັດກັ້ນການແຜ່ລະບາດຂອງພະຍາດ COVID-19 ແລະ ຜ່ອນຜັນບາງມາດຕະການ ຢູ່ນະຄອນຫຼວງວຽງຈັນ ດັ່ງນີ້:

**1. ໃຫ້ຈັດຕັ້ງປະຕິບັດ ມາດຕະການລວມ, ມາດຕະການເພີ່ມເຕີມ ແລະ ມາດຕະການຜ່ອນຜັນ ດັ່ງນີ້:**

1.1. ໃຫ້ຈັດຕັ້ງປະຕິບັດມາດຕະການລວມ ຄື:

1) ຫ້າມບຸກຄົນເດີນທາງ ເຂົ້າ-ອອກ ນະຄອນຫຼວງວຽງຈັນ ເຊິ່ງຍັງເປັນພື້ນທີ່ ທີ່ມີການແຜ່ລະບາດໃນຊຸມຊົນວົງກວ້າງ (ເຂດແດງ) ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດສູນກາງ, ນະຄອນຫຼວງວຽງຈັນ ແລະ ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ;
2) ຫ້າມເປີດຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານກິນດື່ມ, ຮ້ານນວດ-ສະປາ, ຮ້ານອິນເຕີເນັດຄາເຟ;
3) ຫ້າມຈັດປະຊຸມ, ໂຮມຊຸມນຸມ ຫຼື ກິດຈະກໍາຕ່າງໆ ຫຼາຍກວ່າ 10 ຄົນໃນເຂດທີ່ໄດ້ຮັບອະນຸຍາດ;
4) ຫ້າມນໍາໃຊ້ເຮືອທຸກລໍາອອກເຄື່ອນໄຫວ ຕາມຊາຍແດນລໍາແມ່ນໍ້າຂອງ, ຍົກເວັ້ນເຮືອຂອງກອງກໍາລັງ ປກຊ-ປກສ;
5) ຫ້າມໂຄສະນາ, ເຜີຍແຜ່ ແລະ ສົ່ງຕໍ່ຂໍ້ມູນຂ່າວສານ ທີ່ບໍ່ມີມູນຄວາມຈິງ;
6) ຫ້າມສວຍໂອກາດກັກຕຸນ ແລະ ຂຶ້ນລາຄາສິນຄ້າອຸປະໂພກ-ບໍລິໂພກ;
7) ໂຈະການຮຽນ-ການສອນຊົ່ວຄາວ ທຸກຊັ້ນ, ທຸກສາຍ ໃນສະຖານການສຶກສາ ແຕ່ໃຫ້ຈັດຕັ້ງການຮຽນ-ການສອນທາງໄກ.

1.2. ໃຫ້ຈັດຕັ້ງປະຕິບັດ ມາດຕະການເພີ່ມເຕີມ ຄື:

1) ຫ້າມເປີດຮ້ານເສີມສວຍ, ຮ້ານຕັດຜົມ, ສະຖານທີ່ທ່ອງທ່ຽວ, ສວນອາຫານ, ກາຊີໂນ, ສະນຸກເກີ້, ຮ້ານເກມທຸກປະເພດ, ສັງວຽນຕີໄກ່, ຕະຫຼາດກາງຄືນ ແລະ ອື່ນໆ ທີ່ມີການເຕົ້າໂຮມຄົນຈໍານວນຫຼາຍ;
2) ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່;
3) ຫ້າມເດີນທາງເຂົ້າ-ອອກບ້ານແດງ ຕາມແຈ້ງການຂອງກະຊວງສາທາລະນະສຸກ ສະບັບເລກທີ 0488/ສທ, ລົງວັນທີ 20 ພຶດສະພາ 2021;
4) ຕັ້ງຈຸດກວດກາຂອງເຈົ້າໜ້າທີ່ ຢ່າງເຂັ້ມງວດ ໃນເຂດທີ່ມີການແຜ່ລະບາດ ເຊິ່ງໄດ້ກໍານົດເປັນ ເຂດ/ບ້ານແດງ ແລະ ນໍາໃຊ້ມາດຕະການ ຕາມທີ່ກໍານົດໄວ້ໃນແຈ້ງການ 0488/ສທ ຂໍ້ II.1 ແລະ ແຈ້ງການ 0377/ອດ.ກຄພນ ຂໍ້ I.ກ;
5) ຫ້າມຕັ້ງຈຸດບໍລິຈາກ ຫຼື ມອບເຄື່ອງຊ່ວຍເຫຼືອທີ່ບໍ່ມີຄວາມປອດໄພ ແລະ ບໍ່ໄດ້ຮັບອະນຸຍາດຈາກອົງການປົກຄອງທ້ອງຖິ່ນ;
6) ຫ້າມຫລິ້ນ ກິລາບານເຕະ, ການອອກກໍາລັງກາຍຢູ່ສະໜາມຫຼວງ, ບຶງທາດຫຼວງ ແລະ ສວນເຈົ້າອານຸວົງ ຍ້ອນເຫັນວ່າຍັງມີຄວາມສ່ຽງ ໃນການຄວບຄຸມຕໍ່ການແຜ່ເຊື້ອພະຍາດ;
7) ປັບໃໝ, ລົງໂທດ ແລະ ໃຫ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຖ້າຫາກບຸກຄົນໃດລະເມີດມາດຕະການຕ່າງໆຕາມທີ່ກໍານົດໄວ້ ໃນຄໍາສັ່ງ 15/ນຍ ແລະ ແຈ້ງການອື່ນໆ ຂອງຄະນະສະເພາະກິດ, ກະຊວງ-ອົງການ ແລະ ຂອງນະຄອນຫຼວງວຽງຈັນ ວາງອອກ.

1.3. ໃຫ້ຈັດຕັ້ງປະຕິບັດມາດຕະການຜ່ອນຜັນ ຄື:

1) ຫຼຸດຜ່ອນການຕັ້ງຈຸດກວດກາ ໃນເຂດທີ່ກໍານົດເປັນການຄວບຄຸມຄວາມສ່ຽງ ລະຫວ່າງເມືອງ, ບ້ານ, ດ້ວຍການກວດກາລາດຕາເວນ ຂອງອົງການປົກຄອງບ້ານ, ປກສ ກຸ່ມບ້ານ, ເຈົ້າໜ້າທີ່ສະເພາະກິດ;
2) ສະຖານທີ່ ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນກິດຈະການ ເຊັ່ນ: ຕະຫຼາດ, ຮ້ານຄ້າ, ສູນການຄ້າ, ຫ້າງຂາຍຍົກ ໃນເຂດທົ່ວໄປ ໃຫ້ປິດບໍ່ກາຍ 22:00 ໂມງ ແລະ ໃນເຂດແດງ ໃຫ້ປິດບໍ່ກາຍ 20:00 ໂມງ, ພ້ອມທັງ ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ ຕາມທີ່ກໍານົດໃນ ແຈ້ງການ 0377/ອດ.ກຄພນ ຂໍ້ II;
3) ຮ້ານອາຫານ ແລະ ຮ້ານກາເຟ ໃຫ້ບໍລິການໃນຮູບແບບຊື້ກັບເຮືອນ, ບໍ່ໃຫ້ລູກຄ້ານັ່ງກິນຢູ່ໃນຮ້ານ;
4) ອະນຸຍາດໃຫ້ອອກກໍາລັງກາຍ, ຫຼິ້ນກິລາກາງແຈ້ງ ເຊັ່ນ: ການຫຼິ້ນກິລາກ໊ອຟ ແລະ ກິລາອື່ນໆ ແຕ່ໃຫ້ເຈົ້າຂອງສະຖານທີ່ດັ່ງກ່າວ ສ້າງແຜນລະອຽດ ໃນການປະຕິບັດມາດຕະການສະກັດກັ້ນ, ປ້ອງກັນພະຍາດ COVID-19 ຢ່າງເຄັ່ງຂັດ;

5) ອະນຸຍາດໃຫ້ຜູ້ຂັບລົດ ແລະ ພະນັກງານຂົນສົ່ງສິນຄ້າ ສາມາດຮັບ-ສົ່ງສິນຄ້າ ຢູ່ພາຍໃນນະຄອນຫຼວງວຽງຈັນ, ຍົກເວັ້ນສະຖານທີ່ ທີ່ຖືກກຳນົດເປັນ ເຂດ/ບ້ານແດງ.

2. ໃຫ້ພະແນກສາທາລະນະສຸກ ຈັດຕັ້ງການສັກວັກຊິນເຂັມທີ 2, ຊອກຄົ້ນຫາຜູ້ຕິດເຊື້ອໄປປິ່ນປົວ, ຊອກຄົ້ນຫາຜູ້ສຳຜັດໃກ້ຊິດ, ເກັບຕົວຢ່າງກວດຫາເຊື້ອ, ອະນາໄມຂ້າເຊື້ອສະຖານທີ່ ແລະ ຂີ້ເຫຍື້ອຕິດເຊື້ອ, ນຳສົ່ງຜູ້ປິ່ນປົວຫາຍດີ ແລະ ຜູ້ສຳຜັດໃກ້ຊິດ ໄປຈຳກັດບໍລິເວນ, ກວດກັ່ນກອງອຸນຫະພູມ ຜູ້ເດີນທາງມາຈາກຕ່າງປະເທດ, ຕິດຕາມຜູ້ເຂົ້າຈຳກັດບໍລິເວນຢູ່ໂຮງແຮມ, ສູນຈຳກັດບໍລິເວນ ແລະ ປະເມີນ ເຂດ/ບ້ານແດງ, ເຫຼືອງ ແລະ ຂຽວ ຕາມແຈ້ງການຂອງກະຊວງສາທາລະນະສຸກ ສະບັບເລກທີ 0488/ສທ, ລົງວັນທີ 20 ພຶດສະພາ 2021;

3. ໃຫ້ພະແນກສຶກສາທິການ ແລະ ກິລາ ສືບຕໍ່ໂຈະການຮຽນ-ການສອນ ຊົ່ວຄາວ ທຸກຊັ້ນ, ທຸກສາຍ ໃນສະຖານການສຶກສາ ເຖິງວັນທີ 04 ມິຖຸນາ 2021, ແຕ່ໃຫ້ຈັດຕັ້ງການຮຽນ-ການສອນທາງໄກແທນ ຕາມແຈ້ງການຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 470/ສສກ, ລົງວັນທີ 20 ພຶດສະພາ 2021; ຕິດຕາມກວດກາ ແລະ ດຳເນີນມາດຕະການຕໍ່ຜູ້ລະເມີດເປີດຮ້ານສະນຸກເກີ້, ສັງວຽນຕີໄກ່ ແລະ ສະຖານທີ່ອອກກຳລັງກາຍ ທີ່ບໍ່ໄດ້ຮັບອະນຸຍາດ;

4. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ຕິດຕາມກວດກາ ແລະ ຄຸ້ມຄອງການອະນຸຍາດດຳເນີນກິດຈະການຮ້ານຄ້າຂາຍຍົກ - ຂາຍຍ່ອຍ; ການດຳເນີນການຜະລິດຂອງບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕາມແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0377/ອຄ.ກຄພນ ແລະ ສະບັບເລກທີ 0378/ອຄ.ກອຫ, ລົງວັນທີ 21 ພຶດສະພາ 2021; ຕິດຕາມກວດກາ ແລະ ດຳເນີນມາດຕະການຕໍ່ຜູ້ທີ່ສວຍໂອກາດ ກັກຕຸນ, ຂຶ້ນລາຄາສິນຄ້າອຸປະໂພກ-ບໍລິໂພກ ແລະ ລະເມີດເປີດຮ້ານເສີມສວຍ, ຮ້ານຕັດຜົມ ແລະ ຮ້ານກິດຈະການຕ່າງໆ ທີ່ຫ້າມ;

5. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າເຂົ້າ-ອອກ, ເຄື່ອງຂອງໂຄງການ, ເຄື່ອງຮັບໃຊ້ການຜະລິດ ຈາກຕ່າງປະທດ, ຕ່າງແຂວງ ແລະ ຢູ່ພາຍໃນນະຄອນຫຼວງວຽງຈັນ; ຕິດຕາມກວດກາ ການລະເມີດມາດຕະການປ້ອງກັນພະຍາດ COVID-19 ຢູ່ໂຄງການກໍ່ສ້າງຕ່າງໆ ແລະ ການລະເມີດມາດຕະການໂຈະການຂົນສົ່ງໂດຍສານ ຕາມແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 293/ຍທຂ, ລົງວັນທີ 21 ພຶດສະພາ 2021 ແລະ ສະບັບເລກທີ 349/ຍທຂ, ລົງວັນທີ 23 ເມສາ 2021;

6. ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕິດຕາມກວດກາ ແລະ ດຳເນີນມາດຕະການຕໍ່ຜູ້ລະເມີດເປີດກິດຈະການຮ້ານບັນເທີງ, ຮ້ານຄາຣະໂອເກະ, ຮ້ານກິນດື່ມ, ຮ້ານນວດ-ສະປາ, ຮ້ານອິນເຕີເນັດຄາເຟ, ສະຖານທີ່ທ່ອງທ່ຽວ, ສວນອາຫານ, ກາຊີໂນ, ຮ້ານເກມທຸກປະເພດ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021 ແລະ ແຈ້ງການຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 0377/ຖວທ, ລົງວັນທີ 13 ເມສາ 2021;

7. ໃຫ້ກຳລັງ ປກຊ-ປກສ ຄຸ້ມຄອງບັນດາດ່ານເຂົ້າ-ອອກເມືອງ, ກວດກາລາດຕະເວນຕາມຊາຍແດນແມ່ນ້ຳຂອງ, ກວດກາເຮືອ, ການຄ້າຂາຍເຖື່ອນ ແລະ ຄົນລັກລອບເຂົ້າ-ອອກເມືອງ, ກວດກາການເຂົ້າ-ອອກ ຕາມເຂດແດນນະຄອນຫຼວງວຽງຈັນ ກັບຕ່າງແຂວງ; ຈັດຕັ້ງລາດຕະເວນຮັກສາຄວາມສະຫງົບຕາມຈຸດຕ່າງໆ; ຈັດຕັ້ງກຳລັງເຂົ້າຄຸ້ມຄອງ, ປ້ອງກັນສະຖານທີ່ຈຳກັດບໍລິເວນ, ໂຮງໝໍ, ບ້ານແດງ, ບ້ານເຫຼືອງ; ສົມທົບກັບພະແນກເຕັກໂນໂລຊີ ແລະ ການສື່ສານ ຕິດຕາມ, ກວດກາ ແລະ ແກ້ໄຂການໂຄສະນາ, ເຜີຍແຜ່, ສົ່ງຕໍ່ຂໍ້ມູນຂ່າວສານ ທີ່ບໍ່ມີມູນຄວາມຈິງ ແລະ ການແຈກຢາຍເຄື່ອງຊ່ວຍເຫຼືອຂອງບຸກຄົນ ທີ່ບໍ່ຮັບປະກັນຄວາມປອດໄພຈາກການແຜ່ເຊື້ອ; ສະກັດກັ້ນການແຜ່ເຊື້ອເຂົ້າຄ້າຍຄຸມຂັງ, ສູນບຳບັດຢາເສບຕິດ ແລະ ສະກັດກັ້ນບັນດາປະກົດການຫຍໍ້ທໍ້ຂອງສັງຄົມ;

8. ໃຫ້ພະແນກການເງິນ ສືບຕໍ່ລະດົມ ແລະ ຮັບການຊ່ວຍເຫຼືອຈາກສັງຄົມ; ນຳພາການຂຶ້ນແຜນງົບປະມານ ແລະ ອຸປະກອນຮັບໃຊ້; ຄຸ້ມຄອງ ແລະ ເບີກຈ່າຍງົບປະມານ, ເຄື່ອງຊ່ວຍເຫຼືອໃຫ້ທຸກພາກສ່ວນ ທີ່ປະຕິບັດໜ້າທີ່; ຂຶ້ນແຜນຊຳລະຄ່ານ້ຳ, ຄ່າໄຟ, ຄ່າຂີ້ເຫຍື້ອ ຢູ່ສູນຈຳກັດບໍລິເວນ, ໂຮງໝໍພາກສະໜາມ (ຫ້ວຍຫົງ ແລະ ລ້ານຊ້າງ) ແລະ ເຮັດສັນຍາເຊົ່າໂຮງແຮມ ເພື່ອບ່ອນຈຳກັດບໍລິເວນໃຫ້ແກ່ແພດໝໍ ແລະ ຜູ້ປິ່ນປົວຫາຍດີໃໝ່;

9. ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບອົງການປົກຄອງເມືອງ ແລະ ບ້ານ ຮີບຮ້ອນເກັບກຳຂໍ້ມູນແຮງງານ, ບຸກຄົນ ແລະ ຄອບຄົວ ທີ່ມີຄວາມຫຍຸ້ງຍາກຂາດແຄນ ເພື່ອຈັດຕັ້ງການຊ່ວຍເຫຼືອຢ່າງທັນການ;

10. ໃຫ້ອົງການປົກຄອງເມືອງ ແລະ ບ້ານ ສົມທົບກັບເຈົ້າໜ້າທີ່ຕຳຫຼວດ ຕັ້ງຈຸດກວດຄົນເຂົ້າອອກບ້ານແດງ; ຄຸ້ມຄອງກວດກາການຫ້າມປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ນັກບວດ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ຢູ່ນະຄອນຫຼວງວຽງຈັນ ບໍ່ໃຫ້ອອກຈາກເຮືອນ ຫຼື ທີ່ພັກອາໄສຂອງຕົນ ຖ້າມີຄວາມຈຳເປັນອອກນອກບ້ານ ຕ້ອງຂໍໜັງສືອະນຸມັດຈາກອົງການປົກຄອງບ້ານ, ຍົກເວັ້ນການອອກໄປຊື່ວຄາວ ເຊັ່ນ: ໄປຊື້ອາຫານ ແລະ ຢາ, ໄປໂຮງໝໍ ຫຼື ມີໜັງສືຈາກຫ້ອງການຂອງຕົນ ໃຫ້ໄປປະຈຳການ; ໃຫ້ສືບຕໍ່ເອົາເຮືອທຸກລຳ ຕາມຊາຍແດນແມ່ນ້ຳຂອງຂຶ້ນຝັ່ງ ແລະ ລັອກກະແຈໄວ້, ໃຫ້ຄຸ້ມຄອງກວດກາຈຳນວນ ແລະ ຂອບເຂດ ຜູ້ທີ່ຈຳເປັນຕ້ອງໄປທຳການຜະລິດກະສິກຳເປັນສະບຽງອາຫານ ເພື່ອບໍ່ໃຫ້ມີຄວາມສ່ຽງ ຕໍ່ການລະບາດຂອງພະຍາດ COVID-19, ພ້ອມທັງເອົາໃຈໃສ່ ກວດກາລາດຕະເວນ ໃນຂອບເຂດທົ່ວເມືອງ ໃນການປະຕິບັດຄຳສັ່ງ, ແຈ້ງການ, ຄຳແນະນຳ ທີ່ກຳນົດອອກໃຫ້ເຂັ້ມງວດ;

11. ໃຫ້ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສະຫະພັນນັກຮົບເກົ່າ ປະກອບສ່ວນໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ປະຊາຊົນ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ນະຄອນຫຼວງວຽງຈັນ ເຫັນໄດ້ໄພອັນຕະລາຍຂອງພະຍາດ COVID-19 ທີ່ມີການກາຍພັນ ແລະ ມີຄວາມຮຸນແຮງເພີ່ມຂຶ້ນ, ພ້ອມທັງຮູ້ຈັກ ວິທີສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂພະຍາດນີ້ ດ້ວຍຕົນເອງ ແລະ ເຫັນໄດ້ຄວາມຈຳເປັນຂອງລັດຖະບານ ກໍ່ຄືນະຄອນຫຼວງວຽງຈັນ ໃນການປະກາດໃຊ້ ແລະ ບັງຄັບປະຕິບັດມາດຕະການຕ່າງໆ ເພື່ອສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດດັ່ງກ່າວ ເພື່ອປົກປ້ອງສຸຂະພາບ ແລະ ຊີວິດຂອງຊາວນະຄອນຫຼວງວຽງຈັນ ກໍ່ຄືຊາວລາວໃນທົ່ວປະເທດ;

12. ໃຫ້ຄະນະສະເພາະກິດນະຄອນຫຼວງວຽງຈັນ, ເມືອງ ເປັນຜູ້ບັນຊາ, ອຳນວຍຄວບຄຸມໂດຍກົງ ການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ແລະ ເມືອງ; ຮີບຮ້ອນກຳນົດສະຖານທີ່ ທີ່ມີຄວາມປອດໄພສຳລັບການຈຳກັດບໍລິເວນ ແລະ ແຍກປ່ຽວຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອ ແລະ ຜູ້ທີ່ປິ່ນປົວຫາຍດີ; ພິຈາລະນາອະນຸຍາດໃຫ້ບຸກຄົນທີ່ມີຄວາມຈຳເປັນ ແລະ ມີເງື່ອນໄຂຕ້ອງເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ;

13. ຮຽກຮ້ອງມາຍັງປະຊາຊົນ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ນັກບວດ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ຢູ່ໃນນະຄອນຫຼວງວຽງຈັນ ຈົ່ງເຂົ້າໃຈ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ໃຫ້ມີຄວາມເຂັ້ມງວດ ແລະ ສາມາດຜ່ານພົ້ນການລະບາຂອງພະຍາດ COVID-19 ໃນຊຸມຊົນນະຄອນຫຼວງວຽງຈັນ ໄປໄດ້ເປັນຢ່າງດີ;

14. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດ ຫາກລະເມີດມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງ 15/ນຍ, ແຈ້ງການຂອງຄະນະສະເພາະກິດ, ບັນດາກະຊວງ-ອົງການ ແລະ ຂອງນະຄອນຫຼວງວຽງຈັນ ແມ່ນໃຫ້ດຳເນີນມາດຕະການປັບໄໝ, ລົງໂທດ ແລະ ໃຫ້ຮັບຜິດຊອບ ຕໍ່ຄ່າເສຍຫາຍທີ່ເກີດຂຶ້ນທັງໝົດ ຕາມລະບຽບກົດໝາຍກ່ຽວຂ້ອງຢ່າງເຂັ້ມງວດ;

15. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

**ບ່ອນສົ່ງ:**

| | |
|---|---|
| - ເລຂາ, ຮອງເລຂາ, ຄະນະປະຈຳພັກ ນວ ສະຫາຍລະ | 01 ສະບັບ; |
| - ຄະນະສະເພາະກິດ ສູນກາງ | 01 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ; |
| - ກະຊວງ - ອົງການ ພາກສ່ວນລະ | 01 ສະບັບ; |
| - ຄະນະສະເພາະກິດ ນວ - ເມືອງ ພາກສ່ວນລະ | 01 ສະບັບ; |
| - ພະແນກການ, ອົງການລັດທຽບເທົ່າ ພາກສ່ວນລະ | 01 ສະບັບ; |
| - ເມືອງລະ | 01 ສະບັບ; |
| - ບ້ານລະ | 01 ສະບັບ. |

ນະຄອນຫຼວງວຽງຈັນ
ເຈົ້າຄອງນະຄອນ

**ອາດສະພັງທອງ ສີພັນດອນ**